# ລາວຫຼິງ



ແປ ແລະ ຮຽບຮຽງ ໂດຍ ທ້າວ ຊຽງດາວ

ວຽງຈັນ - 2008

ມອບໃຫ້

ນາງ ດວງເດືອນ

ດ້ວຍຄວາມນັບຖືແລະຮັກແພງ

Sally Chaney

ສາລີ ຄໍາລີ

# ລາວຫຼິງ



ແປ ແລະ ຮຽບຮຽງ ໂດຍ ທ້າວ ຊຽງດາວ
ວຽງຈັນ - 2008

## ລາວຫຼິງ


ແປ ແລະ ຮຽບຮຽງໂດຍ : ທ້າວ ຊຽງດາວ

ຈັດພິມໂດຍ : ທ່ານ ບັນໄທ ຊວນປັນຍາ ແລະ ທ່ານ ສິມປອງ ໄຊສະໝີ

ຂະໜາດ 14,5 x 20,5 ຊມ

ເລກທະບຽນພິມ : 39/ພຈ.12022008

ພິມຄັ້ງທີໜຶ່ງ : ປີ ຄ.ສ 2008

ຈຳນວນພິມ : 2.000 ເຫຼັ້ມ

ພິມທີ່ : ໂຮງພິມສີສະຫວາດ.


ສະຫງວນລິຂະສິດ

ແດ່ດວງວິນຍານ
ຂອງຜູ້ທີ່ໄດ້ສະຫຼະຊີບ
ເພື່ອຄວາມຍືນຍົງຄົງຢູ່
ຂອງຊາດລາວ

# ຄຳນຳ

ເນື່ອງຈາກຂ້າພະເຈົ້າເອງກໍ່ເປັນ " ລາວຫຼົງ " ໂດຍກຳເນີດຜູ້ໜຶ່ງ ຈຶ່ງມີແນວຄິດຊອກຫາຕົ້ນປາຍສາຍເຫດ ແລະທີ່ໄປທີ່ມາຂອງຊຸມຊົນຄົນເຊື້ອຊາດລາວ ຈຳນວນບໍ່ນ້ອຍທີ່ອາໃສຢັ່ງຢາຍຢູ່ກັນໄປທຸກທິດທຸກທາງ ໃນບັນດາປະເທດໃກ້ຄຽງເປັນຕົ້ນຢູ່ໃນປະເທດທາງທິດໃຕ້ຂອງປະເທດລາວເຮົາໃນປັດຈຸບັນ.

ຜ່ານການອ່ານ ແລະ ຄົ້ນຄວ້າຫຼາຍເອກະສານ ທັງເປັນພາສາລາວ, ພາສາຝຣັ່ງເສດ ແລະ ພາສາໄທ ຈຶ່ງໄດ້ພິມເປັນປຶ້ມຫົວນີ້ອອກມາສູ່ສາຍຕາຂອງທ່ານ ຊຶ່ງຂ້າພະເຈົ້າໃສ່ຊື່ແປກໆວ່າ " ລາວຫຼົງ " ອັນເປັນສັບທີ່ນັກຄົ້ນຄວ້າຫຼາຍຄົນທັງລາວ ແລະຕ່າງປະເທດໄດ້ນຳໃຊ້ມາກ່ອນແລ້ວເພື່ອໃສ່ຊື່ໃຫ້ແກ່ຄົນ " ເຊື້ອຊາດລາວ " ທີ່ອາໃສຢູ່ພາຍໃນບັນດາປະເທດໃກ້ຄຽງ ກໍຄືຕ່າງປະເທດດ້ວຍເຫດຜົນຕ່າງໆນາໆ, ສ່ວນໃຫຍ່ແມ່ນຍ້ອນໃນອາດີດປະເທດຊາດຂອງພວກເຮົາຂາດການຈັດຕັ້ງເປັນລັດທີ່ເຂັ້ມແຂງ ຂາດຄວາມສາມັກຄີພາຍໃນຖືກຮຸກຮານ ແລະ ຖືກປຸ້ນສະດົມຈາກຊາດອື່ນ ແລະ ສຸດທ້າຍຍ້ອນນະໂຍບາຍແບ່ງແຍກ ເພື່ອປົກຄອງຂອງພວກອານານິຄົມນິຍົມຝຣັ່ງເສດຜູ້ເປັນນາຍ.

ຜ່ານວິວັດທະນາການທາງປະຫວັດສາດ ແລະ ຍ້ອນນະໂຍບາຍ " ກືນກິນ " ຢ່າງເຈາະຈີງຂອງປະເທດທີ່ເຂົາເຈົ້າອາໃສຢູ່ມັກ ຫຼື ບໍ່ມັກມື້ໜຶ່ງ " ລາວຫຼົງ " ເຫຼົ່ານັ້ນກໍ່ຈະກາຍເປັນ " ລາວເສຍຊາດ " ແລະ ຈະກາຍເປັນ " ຊາດອື່ນ " ໄປຢ່າງຫຼີກລ້ຽງບໍ່ໄດ້.

ໃນການພິມປຶ້ມ " ລາວຫຼົງ " ຫົວນີ້ ຂ້າພະເຈົ້າໄດ້ຈັດແບ່ງອອກເປັນຫ້າພາກດ້ວຍກັນກ່າວຄື:

ພາກທີ I : ກ່ຽວກັບ " ຄົນລາວໃນພາກໃຕ້ສຸດ ຂອງແຫຼມອິນດູຈີນ " ຊຶ່ງເປັນບົດຄວາມຂອງຊຽງໃຕ້ອອກໃນປຶ້ມ " ຫົວ " ພິມຢູ່ທີ່ນະຄອນຫຼວງວຽງຈັນໃນປີ ຄ.ສ. 1972. ເນື້ອໃນສຳຄັນຂອງບົດນີ້ ໄດ້ກ່າວເຖິງຊຸມຊົນຄົນລາວທີ່ອາໃສຢູ່ທາງທິດໃຕ້ ແຕ່ນ້ຳຕົກຄອນພະເພງລົງໄປ ໂດຍສະເພາະກ່ຽວກັບຂະບວນການອົບພະຍົບຂອງຄົນລາວທີ່ຕິດຕາມ "ຄູບາ

ຄູໂພນສະເມັກ " ( ຫຼື ຍາຄູຂີ້ຫອມ ) ເດີນທາງລ່ອງລົງຕາມລຳແມ່ນ້ຳຂອງໄປສ້າງພະເຈດີວັດພູ ຢູ່ເມືອງປາຫາຍ ( ຫຼື ພະນົມເປັນ ) ແລ້ວເດີນທາງກັບຄືນມາຕາມເສັ້ນທາງເດີມ ແລະ ໃນທີ່ສຸດກໍໄດ້ສະຖາປານາອານາຈັກ ນະຄອນຈຳປາສັກຂຶ້ນໃນປີ ຄ.ສ 1713.

ພາກທີ II: ເປັນບົດຄົ້ນຄວ້າໂດຍນາງ Claire F. Escoffier ໃນຫົວເລື່ອງ " ຄົນລາວຢູ່ໃນປະເທດກຳປູເຈຍ, ມັນແມ່ນການຢູ່ຮ່ວມກັນຢ່າງກົມກຽວແທ້ບໍ? ". ເຂົ້າໃຈວ່າ ເປັນບົດຄົ້ນຄວ້າທີ່ລະອຽດທີ່ສຸດເທົ່າທີ່ໄດ້ເຄີຍເຫັນມາ ຊຶ່ງຜູ້ກ່ຽວໄດ້ຍົກຂຶ້ນໃຫ້ເຫັນ ເຖິງສະພາບການຂອງເຂດນ້ຳແດນດິນກໍຄືຂອງຜູ້ຄົນ ທັງຄົນລາວ ແລະ ບັນດາຊົນຊາດຊົນເຜົ່າຕ່າງໆ ທີ່ອາໃສຢູ່ໃນຂົງເຂດດັ່ງກ່າວ ຊຶ່ງກໍມີທັງຄວາມລາບລື້ນ ແລະຄວາມຂົມຂື່ນໃນແຕ່ລະຍຸກ ແຕ່ລະສະໄໝທີ່ແຕກຕ່າງກັນ.

ພາກທີ III: ມີຫົວຂໍ້ວ່າ "ບັ້ນຝັນຮ້າຍ"ເປັນບົດກ່ຽວກັບໄລຍະຂອງປະຫວັດສາດທີ່ຊາຕາກຳປະເທດລາວລ້ານຊ້າງຂອງພວກເຮົາຕົກຕ່ຳທີ່ສຸດ ກ່າວຄືຄົນໃນຊາດຂາດຄວາມສາມັກຄີ ປະເທດແຕກແຍກຖືກຊາດອື່ນ (ໄທສະຫຍາມ ) ຮຸກຮານ ແລະ ຍຶດຄອງແລ້ວກາຍເປັນປະເທດສະຣາດຂອງພວກເຂົາ ແລະ ເມືອງວຽງຈັນກໍຖືກຈູດເຜົາທຳລາຍຈົນກ້ຽງ. ຈາກນັ້ນພຽງ 65 ປີ ປະເທດລາວລ້ານຊ້າງທັງປະເທດໄດ້ຖືກແບ່ງປັນອອກເປັນສອງ " ພູດ " ລະຫວ່າງໄທສະຫຍາມກັບຝຣັ່ງເສດ. ພຽງສິບເອັດປີຕໍ່ມາຝຣັ່ງເສດ ກໍໄດ້ແຍກເອົາດິນລາວໃນພູດຂອງພວກເຂົາ ອັນໄດ້ແກ່ແຂວງຊຽງແຕງ ໄປເຂົ້າກັບປະເທດກຳປູເຈຍ ຈຶ່ງເປັນສາເຫດສຸດທ້າຍທີ່ພາໃຫ້ມີຊຸມຊົນຄົນ " ລາວຫຼົງ " ຈຳນວນບໍ່ນ້ອຍຄ້າງຢູ່ໃນປະເທດດັ່ງກ່າວຕື່ມອີກ.

ພາກທີ IV: ເປັນ " ບັ້ນສະດຸ້ງຕື່ນ "ໂດຍອີງໃສ່ສະພາບການຂອງໂລກທີ່ເອື້ອອຳນວຍພາຍຫຼັງການສິ້ນສຸດຂອງສົງຄາມໂລກຄັ້ງທີ 2 ( 1945 ) ລາວເຮົາທັງຢູ່ຝັ່ງຊ້າຍ ແລະ ຝັ່ງຂວາແມ່ນ້ຳຂອງໄດ້ລຸກຮື້ຂຶ້ນ ເພື່ອປົດປ່ອຍປະເທດຊາດອອກຈາກແອກປົກຄອງຂອງຊາດອື່ນ.

ຢູ່ໃນປຶ້ມຫົວນີ້ ຂ້າພະເຈົ້າໄດ້ກ່າວເຖິງສະເພາະແຕ່ການຕໍ່ສູ້ຂອງຄົນລາວຢູ່ຝັ່ງຊ້າຍທໍ່ນັ້ນ ( ສ່ວນຢູ່ຝັ່ງຂວາ ຂໍເຊີນຊອກອ່ານປຶ້ມ " ຕຽງສີຣີຊັນ " ສະບັບແທ້ - ບໍ່ແມ່ນສະບັບດັດແປງທີ່ພິມ ແລະ ຈຳໜ່າຍໂດຍສຳນັກລາວເສຣີຊົນ LUFO,ROCHESTERN.Y.) ດ້ວຍຫຼາຍຮູບຫຼາຍສີຂອງໄລຍະປະຫວັດສາດ ທີ່ຫຼໍ່ແຫຼມເປັນຕົ້ນການສ້າງຕັ້ງ " ລັດຖະບານລາວອິດສະລະ " ແລະ " ເສຣີ ໄທ " ການຕໍ່ສູ້ດ້ວຍອາວຸດຕ້ານການກັບຄືນມາຂອງຝຣັ່ງເສດ, ການສືບຕໍ່ຕັ້ງ " ລັດຖະບານລາວພັດຖິ່ນ " ຢູ່ປະເທດໄທ, ການທວງຄືນ ເອົາແຂວງຊຽງແຕ່ງ ນຳລັດຖະບານຝຣັ່ງເສດ ແລະ ສຸດທ້າຍການສ້າງຕັ້ງຂະບວນການແນວລາວຮັກຊາດ ພາຍໃຕ້ການນຳພາຂອງພັກ ປະຊາຊົນປະຕິວັດລາວ ຈົນໃນທີ່ສຸດກໍໄດ້ຮັບໄຊຊະນະ ຢ່າງສົມບູນດ້ວຍການປົດປ່ອຍໄດ້ໝົດທົ່ວປະເທດ ແລະ ດ້ວຍການສ້າງຕັ້ງປະເທດຊາດຂອງພວກເຮົາເປັນປະເທດ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ.

ພາກທີ V: ມີຊື່ວ່າ " ບັ້ນລາວສະອື້ນ " ຊຶ່ງເປັນບົດກອນລຳລ່ອງ " ສຽງແຄນແດນລ້ານຊ້າງ " ປະພັນໂດຍ " ລາວຫຼົງ " ຜູ້ນຶ່ງຊຶ່ງມີຊື່ສຽງຂັ້ນອາຈານອັນໄດ້ແກ່ ໝໍລຳ " ດວງຈັນນ້ອຍ ". ຂ້າພະເຈົ້າເຊື່ອແນ່ວ່າຄົນລາວເຮົາເຖິງຈະຢູ່ແຫ່ງຫົນໃດກໍຕາມ ຖ້າຫາກໄດ້ຮັບຟັງກອນລຳບົດນີ້ ປະກອບໃສ່ກັບສຽງແຄນແລ້ວ ຄົງຈະອົດກັ້ນນ້ຳຕາບໍ່ໄດ້ ດ້ວຍຄວາມຕໍ່າຕ້ອຍນ້ອຍໃຈ ແລະ ຄວາມພູມໃຈໄປພ້ອມໆກັນ - ນ້ອຍໃຈຍ້ອນອາດີດອັນມືດມົນທີ່ພາໃຫ້ລາວເຮົາແຕກແຍກກັນ ແລະ ພູມໃຈຍ້ອນເຮົາສາມາດສ້າງຕັ້ງລັດເອກະລາດໄດ້ ເຖິງຈະຍັງມີເນື້ອທີ່ນ້ອຍກ່ວາໃນສະໄໝອາດີດກໍຕາມ ແຕ່ກໍສາມາດດຳລົງຄົງຕົວຢູ່ ແລະ ພັດທະນາກ້າວເດີນໄປສູ່ອານາຄົດຢ່າງໝັກແໜ້ນ ແລະ ມີກຽດສະຫງ່າຄຽງບ່າຄຽງໄລ່ຮ່ວມກັບບັນດາປະເທດເອກະລາດອື່ນໆ ຢູ່ໃນພູມີພາກແຫ່ງນີ້ກໍຄືຢູ່ໃນໂລກ.

ຂໍອຸທິດສ່ວນບຸນກຸສົນຈາກການເຜີຍແຜ່ເນື້ອໃນປຶ້ມຫົວນີ້ ໃຫ້ແກ່ດວງວິຍານຂອງບິດາ ແລະ ມານດາຜູ້ບັງເກີດເກົ້າຂອງຂ້າພະເຈົ້າ ຊຶ່ງເພິ່ນເປັນຄົນ " ລາວແທ້ " ໂດຍກຳເນີດ.

ທ້າວຊຽງດາວ

# ພາກທີ I
## ຄົນລາວໃນພາກໃຕ້ສຸດ ຂອງແຫຼມອິນດູຈີນ
### ( ຄັດຈາກປຶ້ມ " ທິວ " ຂອງຊຽງໃຕ້ - ວຽງຈັນ 1972 )

ຊີວິດຄົນລາວສ່ວນຫຼາຍອາໄສຢູ່ຕາມລຳແມ່ນ້ຳຂອງຖ້າຫາກຂີ່ເຮືອລ່ອງກາຍດອນຄອນກາຍນ້ຳຕົກ " ຄອນພະເພັງ " ນ້ຳຕົກ " ສົມພະມິດ " ແລະ " ແກ້ງຫລີ່ຜີ " ເຊິ່ງເປັນເຂດແດນໃຕ້ສຸດຂອງລາວ ເຂົ້າໄປໃນດິນແດນປະເທດຂະເໝນ ເຮົາຈະໄດ້ເຫັນວ່າໝູ່ບ້ານຕາມສອງຝັ່ງ ແລະ ຕາມເກາະດອນ ລ້ວນແລ້ວແຕ່ເປັນບ້ານຂອງຄົນລາວ.

ໃນເມື່ອຮອດປາກນ້ຳເຊກອງ ເຮົາຈະເຫັນເມືອງໃຫຍ່ສອງເມືອງຄື ເມືອງທາຣາ ( ຫຼື ທາຣາບູຣີ ) ຢູ່ຝັ່ງຂວາ ແລະ ເມືອງຊຽງແຕ່ງຢູ່ປາກນ້ຳເຊກອງຝັ່ງຊ້າຍເຊິ່ງເປັນສູນກາງປົກຄອງຂອງແຂວງ.

ທ່ານຜູ້ເຄີຍເດີນທາງຜ່ານໄປມາ ຈະເວົ້າຢ່າງເຕັມປາກເຕັມສົບວ່າມັນເປັນ " ບ້ານຂອງຄົນລາວ " ທັງນັ້ນ.

ໄປທາງທິດຕາເວັນອອກ ຖ້າເຮົາເລາະຂຶ້ນໄປຈາກເມືອງຊຽງແຕ່ງ ຕາມລຳແມ່ນ້ຳເຊກອງ ນ້ຳເຊຊານ ແລະ ນ້ຳເຊປ້ອກ ເຮົາຈະໄດ້ເຫັນມີແຕ່ໝູ່ບ້ານລາວ ແລະ ຜູ້ຄົນທີ່ອາໄສຢູ່ ແລະ ທຳມາຫາກິນສືບແຕ່ປູ່ຍ່າຕາຍາຍມາໄດ້ຫຼາຍເຊັ່ນຄົນ ກໍ່ລ້ວນແຕ່ເປັນຄົນລາວ. ເຮົາຈະຮູ້ສຶກພາກພູມໃຈຕື່ມອີກ ໃນເມື່ອໄດ້ເຫັນຊາວບ້ານເຫຼົ່ານັ້ນມີຄຳປາກ ຄຳເວົ້າ ນິໄສໃຈຄໍ ຖືຮີດເກົ່າຄອງຫຼັງເຊິ່ງກໍ່ລ້ວນແຕ່ສະແດງໃຫ້ເຫັນວ່າ ເຂົາເຈົ້າເປັນຄົນລາວ ຄືກັນກັບຄົນລາວ ໃນປະເທດລາວ.

ສາມເມືອງໃຫຍ່ຢູ່ແຖບຖິ່ນນັ້ນ ມີຊື່ອັນມ່ວນ ພາໃຫ້ເຮົາຄິດຄະນຶງເຖິງອາດີດຄວາມຫຼັງໃນຄາວທີ່ເຮົາມີໂຊກວາສນາ ໄດ້ຢູ່ຮ່ວມກັນ. ເມືອງດັ່ງກ່າວຄືເມືອງແສນປາງ ຢູ່ແຄມນ້ຳເຊກອງ ເມືອງເວີນໄຊ ຢູ່ແຄມນ້ຳເຊຊານ ແລະ ເມືອງລົມພັດ ຢູ່ແຄມນ້ຳເຊປ້ອກ. ສ່ວນບ້ານສຳຄັນໄດ້ແກ່ ບ້ານນາໂພ, ບ້ານທາງໂຄ, ບ້ານທາງສະຫວາດ, ບ້ານຫີນສູງ, ບ້ານຄຳພຸນ ແລະ ບ້ານບາເດີມ.

ຖ້າເຮົາຈະຂຶ້ນໄປ ແຖບຖິ່ນພູເຂົາ ສ່ວນຫຼາຍໃນເມື່ອກ່ອນແມ່ນໃຊ້ຊ້າງ ເປັນພາຫະນະເຮົາຈະໄດ້ເຫັນໝູ່ບ້ານ ຊາວພູເຂົາເຜົ່າ " ລາວເທິງ " ເປັນຈຸຍາຍກັນຢູ່ທົ່ວໄປ ບ້ານທີ່ສຳຄັນກວ່າໝູ່ໄດ້ແກ່ບ້ານເສັກ ( ຫຼື " ບ້ານລູງ" ເຊິ່ງມີເຊື້ອສາຍດັ້ງເດີມສືບທອດມາຈາກ " ບ້ານແມ່ທວດ " ) ບ້ານບໍ່ແກ້ວ, ບ້ານບໍ່ຄຳ, ບ້ານບໍ່ຈຽງ ຂະເໝນໃຫ້ຊື່ຊາວພູເຂົາເຫຼົ່ານັ້ນວ່າ "ຂະເໝນເທິງ" ແຕ່ຂ້າພະເຈົ້າວ່າ ເອີ້ນເຂົາເຈົ້າ " ລາວເທິງ " ຄົງເໝາະສົມກວ່າເພາະບໍ່ວ່າຢູ່ບ້ານໃດ ຕາແສງໃດ ເຂົາເຈົ້າຕ່າງກໍ່ໃຊ້ພາສາລາວ ເປັນພາສາກາງ. ນອກຈາກພາສາລາວ ແລະ ພາສາເຜົ່າເຂົາເຈົ້າເອງແລ້ວ ເຮົາຈະເອົາພາສາອື່ນ ແມ້ແຕ່ພາສາຂະເໝນ ໄປໃຊ້ກັບເຂົາເຈົ້າຄົງເປັນອັນວ່າ " ເວົ້າບໍ່ເຂົ້າໃຈກັນ ".

ຈາກຊຽງແຕ່ງ ເຮົາມາພາກັນຂີ່ເຮືອລ່ອງຕໍ່ລົງໄປ ທາງໃຕ້ອີກເຮົາກໍ່ຜ່ານບ້ານລາວຫຼາຍໝູ່ບ້ານເຊັ່ນດຽວກັນ ເຊິ່ງກໍ່ມີຊື່ແປກໆ ເປັນຕົ້ນບ້ານບາຈົງ, ບ້ານຄັນແມ່ໝ້າຍ, ບ້ານຄັນຕາບິດ, ບ້ານຄັນຕາສໍ, ບ້ານດອນຊ້າງພາຍ, ບ້ານຝັ່ງ, ບ້ານນາກະສັງ ແລະ ໃຕ້ສຸດ ຫ່າງຈາກເມືອງຊຽງແຕ່ງໄປປະມານສາມສິບຫຼັກກິໂລແມັດແມ່ນບ້ານຊຳບູກ.

ບ້ານຊຳບູກນີ້ແລ້ວທີ່ເປັນບ້ານລາວໃຕ້ສຸດ ຢູ່ໃນລຳແມ່ນ້ຳຂອງຜູ້ຄົນທີ່ອາໃສຢູ່ທີ່ນັ້ນ ໄດ້ມີຄົນລາວປົນກັບຊາວເຜົ່າ " ກວຍ " ແລະ " ສ່ວຍ " ເຊິ່ງມີພາສາປາກເວົ້າຄ້າຍໆກັບພາສາລາວປົນຂະເໝນ.

ຫຼັງຈາກຝຣັ່ງເສດໄດ້ຍຶດຄອງເອົາດິນແດນຂອງເມືອງລາວ ຝັ່ງຊ້າຍແມ່ນ້ຳຂອງ ຈາກປະເທດສະຫຍາມໃນປີ ຄ.ສ. 1893 ກໍ່ມີການໝາຍເຂດນ້ຳແດນດິນກັນ ລະຫວ່າງປະເທດໃນສະຫະພັນອິນໂດຈີນ ເຊິ່ງລະຫວ່າງລາວກັບຂະເໝນແລ້ວ ຝຣັ່ງເສດໄດ້ຍຶດເອົາສະພາບເດີມ ຄືສະພາບຕົວຈິງຂອງປະຊາຊົນ ແລະ ພູມີປະເທດເປັນຫຼັກ ໝາຍຄວາມວ່າຕັ້ງແຕ່ບ້ານ " ຊຳບູກ " ຂຶ້ນເມື່ອເໜືອຝຣັ່ງເສດໄດ້ຮັບຮູ້ ແລະ ຈັດເອົາພູມີພາກແຫ່ງນັ້ນ ໃຫ້ເຂົ້າຢູ່ໃນເຂດນ້ຳແດນດິນຂອງລາວຄືແຕ່ເກົ່າມາຫຼັງ ໂດຍຖືເອົາ " ບຸ່ງຂລາ " ( ຫລືບຸ່ງເສືອ ) ຊຶ່ງຢູ່ໃຕ້ບ້ານຊຳບູກພຽງໜ້ອຍໜຶ່ງເປັນເຂດແດນ ລະຫວ່າງປະເທດຂະເໝນ ກັບປະເທດລາວ [(1)].

ເຮົາໄດ້ກ່າວມາແລ້ວວ່າ " ຊຳບູກ " ເປັນບ້ານໃຕ້ສຸດຂອງລາວ ເຊິ່ງຕັ້ງຢູ່ແຄມແມ່ນ້ຳຂອງອັນນີ້ເປັນຄວາມຈິງ.

ແຕ່ຖ້າເຮົາຫາກເດີນທາງເລິກເຂົ້າໄປ ໃນໃຈກາງເມືອງຂະເໝນແທ້ໆ ແລ້ວເຊາະຊອກລົງໄປທາງໃຕ້ພຸ້ນອີກຕາມເຂດແຂວງຕ່າງໆ ເຮົາຈະໄດ້ເຫັນວ່າ ຍັງມີໝູ່ບ້ານລາວອີກຫຼາຍແຫ່ງ ເຊິ່ງກໍ່ຢູ່ຢາຍກັນໄປຄືນລະທິດລະທາງ ເປັນຕົ້ນຢູ່ແຂວງ " ສວາຍຣຽງ " ກ້ຳຕາເວັນອອກສຽງໃຕ້ ຢູ່ແຂວງ " ໂພທິສັດ " ທິດໃຕ້ນ້ຳທະເລສາບ ແລະ ອີກຢູ່ແຂວງ " ກຳປົງທົມ " ທາງທິດຕາເວັນອອກຂອງນ້ຳທະເລສາບ.

---

**ໝາຍເຫດ** :

(1) ຕົກມາປີຄ.ສ1904 ຝຣັ່ງເສດໄດ້ໂອນເອົາ ແຂວງຊຽງແຕ່ງຕະຫລອດຮອດແຄ້ວນແສນປາງ ເວີນໄຊ ແລະ ລົມພັດ ( ນັບທັງ ແຂວງລັດຕະ ນະຄີຣີ ໃນປັດຈຸບັນເຊິ່ງແຕ່ກ່ອນຂຶ້ນກັບແຂວງຊຽງແຕ່ງ ) ໄປເຂົ້າກັບປະ ເທດຂະເໝນ ໂດຍໃຫ້ເຫດຜົນວ່າ "ເພື່ອຄວາມສະດວກໃນດ້ານການປົກຄອງ " ແລ້ວກໍ່ກຳນົດເອົານ້ຳຕົກ " ຄອນພະເພັງ " ເປັນເຂດແດນລະຫວ່າງສອງ ປະເທດ ( ຂະເໝນ ແລະ ລາວ ) ເທົ່າທຸກວັນນີ້.

ຕາມຄວາມຈິ່ງແລ້ວ ເຫດຜົນທີ່ຝຣັ່ງເສດໄດ້ໂອນເອົາດິນລາວ ຕອນດັ່ງກ່າວໄປເຂົ້າຮ່ວມຢູ່ໃນອານາເຂດຂອງປະເທດຂະເໝນນັ້ນກໍ່ ເພື່ອເປັນການປອບໃຈໃຫ້ແກ່ພະເຈົ້າແຜ່ນດິນກຸງກຳປູເຈຍ ເທົ່ານັ້ນ ເພາະໃນເບື້ອງຕົ້ນຂອງໄລຍະແຫ່ງການປົກຄອງຂອງພວກເຂົາ ຂະບວນ ການຊາດນິຍົມຂະເໝນຂອງເຈົ້າ " ສີວັດຖາ " ແລະ ອາຈານ "ໂປກຳບໍ" ໄດ້ລຸກຂຶ້ນຕໍ່ຕ້ານ ກັບອຳນາດການປົກຄອງ ຂອງພວກອານານິຄົມນິຍົມຝຣັ່ງເສດຢ່າງຮຸນແຮງ.

ເປັນດ້ວຍເຫດໃດ ຄົນລາວຈຶ່ງພາກັນໄປຕັ້ງບ້ານຕັ້ງເຮືອນ ໃນແຖບຖິ່ນດັ່ງກ່າວຢູ່ໃຈກາງຂອງປະເທດຂະເໝນເຊັ່ນນີ້? ແລ້ວກໍ່ບໍ່ມີຜູ້ໃດທັນໃຫ້ຊື່ເປັນພາສາລາວອີກດ້ວຍ ນອກຈາກຂະເໝນເຂົາພາກັນເອີ້ນ ເປັນພາສາເຂົາວ່າ " ພູມລຽວ " ເຊິ່ງແປໄດ້ວ່າ " ບ້ານລາວ " ນັ້ນເອງ.

ເພື່ອຈະເຂົ້າໃຈໃນຕົ້ນປາຍສາເຫດ ຂອງສະພາບການດັ່ງກ່າວ ເຮົາຄົນລາວຈຳເປັນຕ້ອງໄດ້ລ່ອງລົງໄປ ຕາມລຳແມ່ນ້ຳຂອງອີກເທື່ອໜຶ່ງ ແຕ່ເທື່ອນີ້ຈະບໍ່ໄປຄົນດຽວ ຕ້ອງໄປເປັນສິດເປັນໂຍມ ຂອງຜູ້ເຊິ່ງມີບົດບາດສຳຄັນ ໃນຄວາມເປັນມາຂອງປະຊາຊົນ ໝົດທັງພາກໃຕ້ຂອງລາວເຮົາ. ທ່ານຜູ້ນັ້ນໄດ້ແກ່ ຄູບາຄູໂພນສະເມັກ ( ຫຼື ຍາຄູຂີ້ຫອມ ).



ຄູບາຄູໂພນສະເມັກ( ຄ.ສ. 1631 - 1720 )

ໃນທ້າຍສະຕະວັດທີ 17 ສະໄໝເຊິ່ງຢູ່ນະຄອນຫຼວງວຽງຈັນ ເກີດວຸ້ນວາຍຍ້ອນການຍາດແຍ່ງອຳນາດ ຫຼັງຈາກພະເຈົ້າສຸຣິຍະວົງສາ ສິ້ນພະຊົນໃນປີ ຄ.ສ 1694 ຄູບາຄູຂີ້ຫອມເຈົ້າອາວາດວັດໂພນສະເມັກ ປັດຈຸບັນຄືວັດພຣະຄູໂພນສະເມັກ ຢູ່ບ້ານດອນນົກຂຸ້ມ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ ທັງເປັນພະຣາຊະຄູ ປະຈຳວັງຫລວງ ໄດ້ພາສິດໂຍມຫລາຍພັນຄົນອົບພະຍົບຫຼົບໄພ ລ່ອງລົງໄປທາງທິດໃຕ້ຕາມລຳແມ່ນ້ຳຂອງ.

ບູຊະນີຍະສະຖານອັນສຳຄັນ ທີ່ທ່ານໄດ້ພາຄົນລາວ ປະຕິສັງຂອນໄວ້ເປັນອະນຸສອນ ໃນເສັ້ນທາງອົບພະຍົບຂອງທ່ານກໍ່ແມ່ນ ພະທາດພະນົມຢູ່ທີ່ເມືອງນະຄອນພະນົມ ( ປະເທດໄທ ໃນປັດຈຸບັນ ) ເຊິ່ງໃຜໆກໍ່ຮູ້ ແລະເຄົາຣົບກັນທົ່ວໄປ ທັງສອງຝັ່ງຂອງ.

ຫລາຍວັນເປັນເດືອນ ຫລາຍເດືອນເປັນປີ ຄູບາຄູຂີ້ຫອມ ແລະ ສິດໂຍມພາກັນລ່ອງລົງໄປເລື້ອຍໆ ( ຂ້າພະເຈົ້າເຂົ້າໃຈວ່າ ລຳລ່ອງຂອງຄົງປະດິດຂຶ້ນໃນສະໄໝນັ້ນ ) ແມ້ແຕ່ແກ້ງໃຫຍ່ໆເປັນຕົ້ນ ແກ້ງກະເບົາ, ແກ້ງໄກ່ແມ່ຟັກ, ແກ້ງສົມພະມິດພະເພງ ຫຼື ຫລີ່ຜີ, ແກ້ງທອງແດງ, ແກ້ງຕາໂຫລະປາຊິວ, ແກ້ງພະປາຕັງ ກໍ່ຍັງກີດກັ້ນບໍ່ໄດ້ ໂດຍຜ່ານດອນຄອນ ປາກນ້ຳເຊກອງ ບ້ານບາຈົງ ແລະ ບ້ານຊຳບູກ ເຂົ້າໄປໃນເຂດແດນປະເທດຂະເໝນ ນັບຫລາຍເດືອນເປັນປີ ຈຶ່ງຮອດສະຖານທີ່ແຫ່ງໜຶ່ງ ເຊິ່ງຂະເໝນໃຫ້ຊື່ວ່າ “ ທະເລສີ່ໜ້າ ” ( ບ່ອນທີ່ນ້ຳທະເລສາບ ກັບແມ່ນ້ຳຂອງພົບກັນ ແລ້ວແຍກອອກເປັນສອງເສັ້ນໄຫລຜ່ານຫວຽດນາມລົງສູ່ທະເລຈີນໃຕ້ ) ແລະ ເຊິ່ງເປັນບ່ອນທີ່ອຸດົມສົມບູນໄປດ້ວຍເຂົ້າໃນນາປາໃນນ້ຳ.

ເບິ່ງຕາມສະພາບແວດລ້ອມທົ່ວໄປແລ້ວ ສະຖານທີ່ດັ່ງກ່າວຕ້ອງເປັນເມືອງໃຫຍ່ເມືອງໜຶ່ງ ໃນອະນາຄົດດັ່ງນັ້ນຄູບາຄູຂີ້ຫອມ ຈຶ່ງຕົກລົງສະຖາປານາບູລະນະສະຖານໄວ້ເປັນຫຼັກບ້ານຫຼັກເມືອງ ໂດຍໄດ້ພາຍາດໂຍມຄູນປາທາຍຫຼວງ ເປັນພູດິນນ້ອຍ ແລະ ເທິງຈອມພູນັ້ນໄດ້ສ້າງທາດຂຶ້ນອົງໜຶ່ງ ເປັນທີ່ສະຫງ່າງາມ.

ຊາວຂະເໝນຢູ່ອ້ອມແອ້ມທີ່ນັບຖືພຸດທະສາສນາ ເກີດມີຄວາມສັດທາ ແລະນິຍົມຊົມຊອບຄູບາຄູຂີ້ຫອມຢ່າງລົ້ນເຫຼືອຕ່າງກໍ່ພາກັນຫລັ່ງໄຫລມາຊ່ວຍສ້າງປາທາຍຫລວງ ຫລື ພູດິນນ້ອຍ ແລະ ພະເຈດີດັ່ງກ່າວ ເປັນອີກກະທົກກືກກ້ອງນອງເມືອງ.




* ແຜນທີ່ລຳແມ່ນ້ຳຂອງທີ່ເປັນເສັ້ນທາງເດີນເຂົ້າໄປໃນປະເທດຂະເໝນຂອງຍາຄູຂີ້ຫອມ ແລະ ຍາດໂຍມ.

ຄືນໜຶ່ງເກີດລົມພາຍຸ ແລະ ຝົນຕົກໜັກ ພໍແຈ້ງມາມື້ໃໝ່ມີແມ່ເຖົ້າຂະເໝນຄົນໜຶ່ງຊື່ " ເປັນ " ( ຄຳລາວເຮົາແປວ່າ ເພັນ ຫລື ເຕັມ ) ທີ່ເຝົ້າສວນຢູ່ແຄມນ້ຳຂອງ ລົງໄປອາບນ້ຳແຄມທ່າ ໄດ້ເຫັນຕົ້ນໄມ້ໃຫຍ່ຕົ້ນໜຶ່ງ ໄຫລມາຕາມນ້ຳ ເຊິ່ງມີທັງຮາກ ແລະ ດິນຕິດມາພ້ອມ. ຈາກຮາກໄມ້ດັ່ງກ່າວ ໄດ້ມີແສງເຫຼື້ອມສີ່ງອອກເໝືອນໂລຫະທາດ ຖືກກັບແສງຕາເວັນ ແມ່ເຖົ້າ " ເປັນ " ເຫັນວ່າເປັນສິ່ງແປກປະຫຼາດ ຈຶ່ງຕັ້ງອະທິຖານຂຶ້ນວ່າ ຖ້າແມ່ນເປັນສິ່ງສັກສິດແທ້ ກໍ່ຂໍໃຫ້ຕົ້ນໄມ້ດັ່ງກ່າວໄຫລເຂົ້າມາຫາຕົນ.

ພໍອະທິຖານສຸດຄຳປາກຕົ້ນໄມ້ກໍ່ໄຫລອ່ອຍເຂົ້າມາຫາ ແມ່ເຖົ້າ " ເປັນ " ລາວສ່ອງເບິ່ງເຫັນພະພຸທຮູບໂລຫະໄສງາມອົງໜຶ່ງຄ້າງຢູ່ໃນຮາກໄມ້ ລາວເອົາມືຊວ້ານຂຶ້ນມາທັງດີໃຈ ທັງສັ່ນທິດໆ ທ່າວໆ.

ຕໍ່ມາແມ່ເຖົ້າ " ເປັນ " ໄດ້ນຳເອົາພະພຸທຮູບອົງດັ່ງກ່າວ ໄປເຄນໃຫ້ຄູບາຄູຂີ້ຫອມ ເພື່ອປະດິດສຖານໄວ້ເປັນທີ່ສັກກາຣະບູຊາທີ່ພະເຈດີ ທີ່ກຳລັງສ້າງຢູ່ນັ້ນ. ຄູບາຄູຂີ້ຫອມຍິ່ງມີຊື່ສຽງໂດ່ງດັງເປັນທີ່ເຊື່ອຖືວ່າ ເປັນພະອໍລະຫັນໄປທົ່ວຂົງເຂດໃກ້ຄຽງ ແລະ ຫ່າງໄກ.

ເວລານີ້ຄົນລາວເອີ້ນສະຖານທີ່ດັ່ງກ່າວວ່າ " ວັດພູ " ( ຂະເໝນເອີ້ນ " ວັດພະນົມ " ) ເຊິ່ງໄດ້ເປັນບູຊະນີຍະສະຖານສຳຄັນ ສຳລັບຊາວພຸດ ທີ່ຕັ້ງຢູ່ໃຈກາງເມືອງ " ປາທາຍ " ໃນປັດຈຸບັນຂະເໝນເອີ້ນເມືອງ " ພະນົມເປັນ " ຫລື " ພະນົມໂດນເປັນ " ແປວ່າ " ພູເຂົາແມ່ເຖົ້າເປັນ ".

ຂ່າວອະພິນິຫານອັນໜ້າຕື່ນເຕັ້ນນີ້ ໄດ້ແຜ່ຜາຍອອກໄປເລື້ອຍໆ ຈຶ່ງສ້າງຄວາມບໍ່ພໍພະໄທໃຫ້ພະເຈົ້າແຜ່ນດິນຂະເໝນ ເຊິ່ງປະທັບຢູ່ກຸງ " ອຸດົງ " ຫ່າງຈາກເມືອງປາທາຍໄປທິດຕາເວັນຕົກ ປະມານສີ່ສິບກິໂລແມັດ ພະອົງເຂົ້າໃຈວ່າ ມີພະສົງລາວອົງໜຶ່ງ ພາສິດໂຍມມາຍຶດເອົາດິນແດນຂອງຂະເໝນແລ້ວສ້າງບ້ານສ້າງເມືອງຂຶ້ນ ພະອົງຈຶ່ງສົ່ງກອງທະຫານມາຂັບໄລ່ໃຫ້ອອກຈາກເຂດນ້ຳແດນດິນຂອງພະອົງ.

ຄູບາຄູຂີ້ຫອມບໍ່ມີທາງຈະສູ້ ແລະ ບໍ່ມີຄວາມຕັ້ງໃຈວ່າຈະສູ້ ຈຶ່ງພາພວກຍາດໂຍມທັງຫຼາຍລົງເຮືອຜ່າຍໜີ ອອກຈາກເມືອງປາທາຍ ຂຶ້ນຕາມລຳແມ່ນ້ຳຂອງມາສູ່ເມືອງລາວຄືນ.

ພໍມາຮອດສະຖານທີ່ແຫ່ງໜຶ່ງ ເຊິ່ງລຳແມ່ນ້ຳຂອງປ່ຽນສະພາບມາເປັນແກ້ງເປັນຄັນ ປະກອບດ້ວຍຕົ້ນໄຄ້ຕົ້ນລຳແຊງ ລຽນຊ້າຍລ້າຍ ຢູ່ກາງນ້ຳ ແລະ ໂງ່ນຫີນ ຈຶ່ງເຂົ້າໃຈວ່າຕົນໄດ້ພາຍາດໂຍມອອກພົ້ນ ຈາກເຂດແດນຂະເໝນແລ້ວ. ດ້ວຍເຫດວ່າສະຖານທີ່ດັ່ງກ່າວອຸດົມສົມບູນໄປດ້ວຍເຂົ້າໃນນາ ປາໃນນ້ຳ ຄູບາຄູຂີ້ຫອມຈຶ່ງຕົກລົງຕັ້ງເມືອງຢູ່ທີ່ນັ້ນ ໂດຍໃຫ້ຊື່ວ່າເມືອງ "ສົມບູນ" (ປັດຈຸບັນ ຢູ່ຫ່າງຈາກເມືອງກະແຈະ ໄປທາງທິດເໜືອປະມານສາມສິບກິໂລແມັດ ເຊິ່ງຂະເໝນໃສ່ຊື່ວ່າເມືອງ " ຊຳບໍ " ) ແລ້ວກໍ່ພາກັນປະຕິສັງຂອນພະວິຫານຂຶ້ນໄວ້ໜຶ່ງຫຼັງ ດ້ວຍດິນຈີ່ເພື່ອເປັນຫຼັກເມືອງ ແຕ່ຍັງບໍ່ທັນສຳເລັດ ( ຂະເໝນເຂົາເອີ້ນກັນຢູ່ທຸກວັນນີ້ວ່າ " ພະວິຫານລາວ " ).

ຕໍ່ມາພະເຈົ້າແຜ່ນດິນຂອງຂະເໝນຊາບວ່າ ພວກຄອບຄົວຄົນລາວຍັງບໍ່ທັນອອກຈາກດິນແດນຂອງພະອົງເທື່ອ ບໍ່ພໍແຕ່ເທົ່ານັ້ນຍັງພາກັນສ້າງບ້ານສ້າງເມືອງ ເປັນສິ່ງຖາວອນຢູ່ອີກ ຈຶ່ງສັ່ງເຈົ້າໜ້າທີ່ຜູ້ໃຫຍ່ນຳພາທະຫານ ກອງໜຶ່ງມາເຈລະຈາ ແລະ ຂັບໄລ່. ໃນເບື້ອງຕົ້ນຝ່າຍຂະເໝນສະເໜີວ່າ ຖ້າຄູບາຄູຂີ້ຫອມ ແລະ ຍາດໂຍມຢາກຈະຕັ້ງບ້ານເຮືອນຢູ່ ເປັນການຖາວອນກໍ່ໄດ້ ແຕ່ຕ້ອງຈ່າຍຄ່າທຳນຽມຄອບຄົວລະ 8 ບາດຄຳ ຄູບາຄູຂີ້ຫອມເຫັນວ່າຍາດໂຍມຈະໄດ້ຮັບຄວາມເດືອດຮ້ອນ ຈຶ່ງປະຕິເສດ ແລະ ຕົກລົງເດີນທາງອອກຈາກສະຖານທີ່ດັ່ງກ່າວ ຂຶ້ນເມືອທາງທິດເໜືອ ຕາມລຳແມ່ນ້ຳຂອງ ໂດຍໄດ້ປ່ອຍໃຫ້ເມືອງສົມບູນເປັນຮ້າງ ເຊິ່ງຕໍ່ມາຊາວຂະເໝນໄດ້ເຂົ້າມາອາໃສຢູ່ ແລະ ເອີ້ນຊື່ຕາມພາສາເຂົາເຈົ້າວ່າເມືອງ"ຊຳບໍ".ພໍເດີນທາງຂຶ້ນມາເຖິງສະຖານທີ່ແຫ່ງໜຶ່ງ ເຊິ່ງເປັນດອນຢູ່ກາງນ້ຳບໍ່ມີຜູ້ຄົນອາໃສຢູ່(ຫ່າງໄກຈາກປາກນ້ຳເຊກອງໄປທາງທິດໃຕ້ປະມານ 20 ກວ່າຫລັກກິໂລແມັດ ) ຈຶ່ງພາກັນພັກເຊົາເປັນການຊົ່ວຄາວ. ຢູ່ທີ່ນັ້ນເພິ່ນໄດ້ພາຍາດໂຍມສ້າງພະພຸທຮູບທອງສຳລິດຂຶ້ນໜຶ່ງອົງ ແຕ່ບໍ່ສຳເລັດໄດ້ພຽງແຕ່ເຄິ່ງຄີງ ( ຄືແຕ່ບ່າໄຫລ່ຂຶ້ນຫາພະສຽນ ) ເພິ່ນໄດ້ພາກັນເດີນທາງອອກຈາກສະຖານທີ່ແຫ່ງນັ້ນ ເຊິ່ງຕໍ່ມາຊາວບ້ານເອີ້ນກັນວ່າ " ດອນພະ " ຫລື " ດອນພາດ " ເທົ່າທຸກວັນນີ້ ແລະ ໄດ້ເອົາພະພຸທຮູບເຄິ່ງຄີງທີ່ສ້າງບໍ່ທັນແລ້ວນັ້ນຕິດຕາມໄປນຳດ້ວຍ. ພໍມາຮອດບ້ານລາວແຫ່ງໜຶ່ງ ຢູ່ປາກນ້ຳເຊກອງ

(ຝັ່ງຊ້າຍ) ເຊິ່ງມີຊື່ວ່າບ້ານບາຈຶງ ເພິ່ນໄດ້ພັກເຊົາຢູ່ທີ່ນັ້ນ ແລະ ໄດ້ພາຍາດໂຍມທັງຊາວບ້ານກໍ່ສ້າງພະວິຫານໜຶ່ງຫຼັງ ດ້ວຍດິນຈີ່ຢູ່ທີ່ຍວດນ້ຳເຊກອງ ( ຕິດກັບນ້ຳຂອງ ) ເຊິ່ງເວລານີ້ໄດ້ພັງທະລາຍລົງສູ່ພື້ນນ້ຳໝົດແລ້ວ ( ຍັງເຫຼືອແຕ່ນ້ຳສີແດງຄືສີດິນຈີ່ ໃຫ້ຜູ້ຄົນໄປມາໄດ້ເຫັນພໍເປັນອານຸສອນ ).

ນອກນີ້ເພິ່ນຍັງໄດ້ພາກັນຫຼໍ່ພະພຸດທະຮູບຕໍ່ ຕັ້ງແຕ່ບ່າໄຫລ່ຮອດໜ້າຕັກພ້ອມທັງແທ່ນ ເຊິ່ງເມື່ອເສັດສິ້ນບູນແລ້ວກໍ່ນຳເອົາໄປປະດິດສະຖານໄວ້ ຢູ່ທີ່ວັດບ້ານທາງໂຄ ( ບ້ານລາວຕັ້ງຢູ່ຝັ່ງຂວານ້ຳເຊກອງ ຫ່າງຈາກບ້ານບາຈຶງໄປທາງທິດຕາເວັນອອກປະມານ 5 ກິໂລແມັດ ) ໂດຍໄດ້ຖວາຍພະນາມໃຫ້ວ່າ " ພະ ອົງແສນ " ( ຄືມີນ້ຳໜັກເຖິງໜຶ່ງແສນເຟື້ອງເງິນຕາເກົ່າ )[3].

ຢູ່ທີ່ບ້ານທາງໂຄເພິ່ນໄດ້ພາຍາດໂຍມ ແລະ ຊາວບ້ານຫຼໍ່ພະພຸດທະຮູບຕື່ມອີກສອງອົງ ດ້ວຍທອງສຳລິດອັນໄດ້ແກ່ " ພະອົງຕື້ " ແລະ " ພະຄຳຢາດ " ເຊິ່ງມີຮູບຊົງງົດງາມຄືກັນ ແຕ່ໃຫຍ່ ແລະ ໜັກກວ່າ " ພະອົງແສນ " .

---

**ໝາຍເຫດ** :

(3) - ເນື່ອງຈາກ " ພະອົງແສນ " ມີຮູບຊົງສວຍສົດງົດງາມທີ່ສຸດ ແລະ ໃນປີ ຄ.ສ 1859 ເມືອງຊຽງແຕ່ງກໍ່ຄືໝົດທັງປະເທດລາວລ້ານຊ້າງ ເປັນເມືອງ ຂຶ້ນຂອງສະຍາມ ຣາຊະການທີ່ 4 ( ຄືພະປິ່ນເກົ້າ ) ຈຶ່ງໄດ້ແຕ່ງຄົນມາຍຶດ ເອົາໄປປະດິດສະຖານໄວ້ຢູ່ວັດທົງຣັດຕະນາຣາມ ( ຝັ່ງທົນ, ເຂດບາງ ກອກໃຫຍ່ ) ເທົ່າທຸກວັນນີ້.

- ໃນປີ ຄ.ສ 1904 ເຊິ່ງເປັນປີທີ່ຝຣັ່ງເສດໂອນເອົາແຂວງຊຽງແຕ່ງ ໄປເຂົ້າກັບປະເທດຂະເໝນນັ້ນ ຢູ່ໃນຕົວເມືອງຊຽງແຕ່ງມີວັດລາວຢູ່ 3 ແຫ່ງ ອັນ ໄດ້ແກ່: ກ) ວັດກັດຕິຍາຣາມ ຫລື ວັດກາງ. ຂ) ວັດພະໃຫຍ່ ຫລື ວັດໃຕ້. ຄ) ວັດສາວແກ້ວມະນີວັນ ຫລື ວັດເໜືອ.

ຕໍ່ມາຄູບາຄູຂີ້ຫອມກັບຍາດໂຍມສ່ວນໃຫຍ່ ພາກັນເດີນທາງຕໍ່ຂຶ້ນເມືອເໜືອຕາມລຳແມ່ນ້ຳຂອງໂດຍໄດ້ເອົາຄອບຄົວຂອງຊຽງແປງຕິດຕາມດ້ວຍບໍລິວານຈຳນວນໜຶ່ງ ໄວ້ໃຫ້ຕັ້ງຫຼັກແຫຼ່ງ ສ້າງບ້ານສ້າງເມືອງ ຢູ່ຝັ່ງຊ້າຍນ້ຳເຊກອງ ເຄິ່ງກາງລະຫວ່າງ ບ້ານບາຈຶ່ງກັບບ້ານທາງໂຄ ເຊິ່ງກາຍມາເປັນ " ເມືອງຊຽງແຕ່ງ"ຈົນເທົ່າທຸກວັນນີ້(ຂະເໝນເອີ້ນວ່າ"ສະຕຶງແຕຣງ").ຫລັງຈາກໄດ້ສະຖາປານາເມືອງຊຽງແຕ່ງ ເປັນທີ່ຮຽບຮ້ອຍແລ້ວ ຊາວບ້ານກໍ່ໄດ້ອັນເຊີນເອົາພະພຸດທະຮູບທັງສາມອົງດັ່ງກ່າວ ມາປະດິດສະຖານໄວ້ຢູ່ທີ່ວັດກັດຕິຍາຣາມ ( ຫລືວັດກາງ ).

ໃນການເດີນທາງຕໍ່ຂຶ້ນເມືອເໜືອນັ້ນ ເມື່ອກາຍນ້ຳຕົກພະເພງ ກາຍດອນຄອນ ແລະ ໄປເຖິງບ້ານດອນໂຂງ ເຊິ່ງເປັນດອນໃຫຍ່ກວ່າໝູ່ ຄູບາຄູຂີ້ຫອມກໍໄດ້ພາຍາດໂຍມພັກເຊົາ ແລ້ວເອົາຄອບຄົວຂອງຈານຫວດຕິດຕາມດ້ວຍ ບໍລິວານຈຳນວນໜຶ່ງໄວ້ຢູ່ທີ່ນັ້ນ ເພື່ອສ້າງບ້ານສ້າງເມືອງ ເຊິ່ງເປັນເມືອງໂຂງດັ່ງທີ່ພວກເຮົາເຈົ້າຂ້ອຍຮູ້ຈັກກັນເທົ່າທຸກວັນນີ້.

ຄູບາຄູຂີ້ຫອມເປັນພະອໍລະຫັນທີ່ໄດ້ຮັບຄວາມນິຍົມ ແລະ ເຄົາລົບນັບຖືຢ່າງກວ້າງຂວາງດັ່ງນັ້ນຕົກຮອດປີຄ.ສ 1713ທ່ານຈຶ່ງແຕ່ງຄົນໄປອັນເຊີນ"ເຈົ້າໜໍ່ກະສັດ " ຊຶ່ງອົບພະຍົບຫຼົບໄພຈາກວຽງຈັນ ຢູ່ບ້ານ " ງິ້ວພັນລຳສົມສະນຸກ" ກັບພະມານດາ ເຈົ້າຍິງສຸມັງຄະລາ ທິດາຂອງພະເຈົ້າສຸຣິຍະວົງສາ ໃຫ້ມາສະເວີຍຣາດໃນພະນາມ " ເຈົ້າສ້ອຍສີສະໝຸດ ພຸດທາງກູນ " ເປັນເຈົ້າແຜ່ນດິນ " ນະຄອນຈຳປາສັກ " ເຊິ່ງທ່ານໄດ້ຈັດຕັ້ງຂຶ້ນຕາມແບບຢ່າງ ຂອງກຸງສີສັດຕະນາຄະນະຫຸດນະຄອນວຽງຈັນ.

ນະຄອນຈຳປາສັກ ຈຶ່ງເປັນຣາຊອານາຈັກດຳຣົງຕົນເປັນປະເທດເອກະລາດ ໄດ້ພຽງ 64 ປີ ເທົ່ານັ້ນ ກ່ອນຈະຕົກເປັນປະເທດສະຣາດ ( ເມືອງຂຶ້ນ ) ຂອງສຍາມ ໃນປີ 1777 ( ນະຄອນວຽງຈັນຕົກເປັນເມືອງຂຶ້ນຂອງສຍາມ ໜຶ່ງປີຕໍ່ມາຄືໃນປີ 1778 ). ຄູບາຄູໂພນສະເມັກໄດ້ສິ້ນພະຊົນຢູ່ນະຄອນຈຳປາສັກໃນປີ ຄ.ສ 1720 ລວມອາຍຸໄດ້ 90 ພັນສາ. ຍາດໂຍມ ແລະ ປະຊາຊົນຜູ້ທີ່ມີນ້ຳໃຈເຫລື້ອມໃສໃນຕົວທ່ານ ໄດ້ສ້າງພະເຈດີ ຫລື ທາດອົງໜຶ່ງເພື່ອເກັບອັດຖິຂອງທ່ານໄວ້ ຢູ່ພາຍໃນວັດແຫ່ງໜຶ່ງ ທາງທິດໃຕ້ຂອງເມືອງຈຳປາສັກ ເຊິ່ງເປັນ

ທີ່ຮູ້ຈັກກັນໂດຍທົ່ວໄປວ່າ " ວັດທາດ ".

ບັດນີ້ເຮົາມາກ່າວເຖິງລາວແຕກເສິກຢູ່ເມືອງປາທາຍ ( ຫລືເມືອງພະນົມເປັນ ).

ໃນຄາວທີ່ຂະເໝນ ຍົກກອງທະຫານຈາກກຸງອຸດົງ ມາຂັບໄລ່ລາວອອກຈາກເມືອງປາທາຍນັ້ນ ຍັງມີລາວອີກສາມຈຸ ອາດຈະດ້ວຍເຫດວ່າ ໄດ້ໜີໄປທຳມາຫາກິນ ຢູ່ຂົງເຂດອ້ອມແອ້ມນັ້ນກໍ່ເປັນໄດ້ ຫລືກໍ່ເຮືອບໍ່ພໍຄົນກໍ່ເປັນໄດ້ ຈຶ່ງບໍ່ໄດ້ລົງເຮືອໜີມານຳຄູບາຄູຂີ້ຫອມ.

ລາວທັງສາມຈຸດັ່ງກ່າວ ຈຶ່ງພ່າຍໜີຕາຍຍ້ານຂະເໝນຈັບໄປຂ້າ ແຕກກະຈັດກະຈາຍໄປຄົນລະທິດລະທາງ ຈຸໜຶ່ງໄປທາງທິດໃຕ້ ເມື່ອໝົດໄພອັນຕະລາຍແລ້ວ ກໍ່ພາກັນຕັ້ງບ້ານຢູ່ເຂດ " ສວາຍຣຽງ " ເຊິ່ງຂະເໝນໃຫ້ຊື່ວ່າ " ບ້ານລາວ" ເທົ່າທຸກວັນນີ້.

ຈຸທີ່ສອງໄປທາງທິດເໜືອເຂົ້າໄປໃນເຂດແຂວງ " ກຳປົງທົມ " ພາກັນຕັ້ງບ້ານຢູ່ຕາແສງ " ບາຣາຍນຳ້ໃສ " ບ້ານດັ່ງກ່າວກໍ່ມີຊື່ປັດຈຸບັນວ່າ " ບ້ານລາວ " ເໝືອນກັນ.

ແລະຈຸທີ່ສາມຜ່າຍໜີໄປທາງທິດຕາເວັນຕົກ ຕັ້ງບ້ານຢູ່ " ທະເລບາຕີ " ເຂດເມືອງ " ໂພທິສັດ " ຢູ່ທາງທິດໃຕ້ຂອງທະເລສາບ ເຊິ່ງກໍ່ມີຊື່ວ່າ " ບ້ານລາວ" ເຊັ່ນດຽວກັນ.

ນອກນີ້ຍັງມີເຊື້ອສາຍລາວອີກຫຼາຍພັນຄົນ ດຳລົງຊີວິດສ່ວນມາກເປັນຊາວປະມົງ ອາໄສຢູ່ໃນຂົງເຂດ " ເກາະກົງ " ຂອງຂະເໝນໃນອ່າວສະຍາມ. ລາວຊຸມດັ່ງກ່າວບໍ່ແມ່ນມາຈາກສິດໂຍມຂອງຄູບາຄູຂີ້ຫອມແຕ່ປະການໃດແຕ່ກໍ່ເປັນເຊື້ອເປັນສາຍຂອງລາວວຽງຈັນເຮົາເໝືອນກັນ. ເຂົາເປັນລູກເປັນຫລານສືບຕໍ່ມາຈາສະເລີຍເສິກ ທີ່ສະຍາມໄດ້ກວດເອົາໄປ ຈາກນະຄອນວຽງຈັນສະໄໝທີ່ພະເຈົ້າອະນຸວົງ ເສຍສົງຄາມກູ້ເອກະລາດ ຈາກສະຍາມໃນປີ ຄ.ສ 1828 ເຊິ່ງໄທໄດ້ສົ່ງເຂົ້າໄປຕັ້ງພູມລຳເນົາ ຢູ່ແຂວງຈັນທະບູຣີ. ສ່ວນໜຶ່ງຂອງຄົນລາວດັ່ງກ່າວໄດ້ອອກໄປທຳມາຫາກິນ ຕາມເກາະຕາມດອນ ໃນອ່າວສະຍາມຈຶ່ງໄດ້ຕັ້ງເຮືອນຊານບ້ານຊ່ອງຢູ່ເຂດ " ເກາະກົງ " ສືບຕໍ່ເປັນພົນລະເມືອງຂອງຂະເໝນມາເທົ່າທຸກວັນນີ້.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ